Lao Southern Baptist Fellowship

# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 2 ກໍຣະກົດ 2006 ( 7-2-2006 )

## ຂ້າພະເຈົ້າຈະຫັນຫາພຣະເຈົ້າເພື່ອຄວາມຊ່ອຍເຫລືອ

**ຂໍ້ພຣະຄັມພີໃນບົດຮຽນ:** ອພຍ 1:5-14; 2:23-25

**ຄວາມຈິງໃນພຣະຄັມພີ:** ພຣະເຈົ້າຮູ້ຈັກ ແລະເປັນຫ່ວງເປັນໃຍໃນທຸກໆເຣື່ອງທີ່ເກີດຂື້ນກັບຄົນທີ່ເຊື່ອ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ແມ່ນເພື່ອຊ່ອຍເຫລືອທ່ານໃຫ້ສະແດງອອກໃຫ້ເຫັນເຖິງການເພິ່ງພຣະເຈົ້າດ້ວຍ:

- ການພິສູດໃຫ້ເຫັນວ່າພາຣະໜັກຊື່ງໃນນັ້ນຄວາມເປັນຫ່ວງເປັນໃຍຂອງພຣະເຈົ້າໄດ້ເປັນທີ່ມີຫລັກຖານອັນຊັດເຈນຕໍ່ທ່ານ; ແລະ
- ການສະແດງອອກເຖິງຄວາມຮູ້ບຸນຄຸນຕໍ່ພຣະເຈົ້າທີ່ໄດ້ເປັນຫ່ວງເປັນໃຍຕໍ່ທ່ານໃນທຸກໆສະພາບການ.

### ຂ້າພະເຈົ້າຈະກັບມາຫາພຣະເຈົ້າໄດ້ຢ່າງໃດເມື່ອປະເຊີນກັບພາຣະອັນໜັກໜ່ວງຊື່ງເກີນກວ່າຄວາມສາມາດຂອງຂ້າພະເຈົ້າ?

ຂ້າພະເຈົ້າພ້ອມດ້ວຍພັລຍາບໍ່ຢາກຈະເຫັນຊີວິດແບບໃນເດືອນຕຸລາ 2004 ກັບຄືນມາໃຫ້ເຫັນອີກ. ພວກເຮົາຢາກຈະປຸກເຮືອນ ພ້ອມທັງເຮັດຫລາຍຢ່າງດ້ວຍພວກເຮົາເອງ. ຄວາມຝັນຂອງພວກເຮົາກໍເປັນຈິງຂື້ນໃນທີ່ສຸດ. ອີກປະມານສາມເດືອນທຸກຢ່າງກໍຈະສຳເຣັດບໍຣິບູນລົງ, ແຕ່ວ່າຄົງຈະໄດ້ເຂົ້າໄປຢູ່ໃນປະມານຄຣິສມາດທີ່ຈະມານີ້. ເມັຽຂ້າພະເຈົ້າຊື່ ອາລີສ ອອກກິນບຳນານແລ້ວ ເປັນຜູ້ຮັບຜິດຊອບໃນເຣື່ອງການທາສີ ທັງໆທີ່ວ່າບາງຄັ້ງຄາວລາວກໍບໍ່ສະບາຍດີປານໃດ. ຂ້າພະເຈົ້າໄດ້ແນະນຳໃຫ້ລາວໄປຫາດອກເຕີ. ການບົ່ງມະຕິພະຍາດໄດ້ອອກມາເໝືອນກັບວ່າໄດ້ຖືກຕັດສິນໃຫ້ປະຫານຊີວິດ: ລາວເປັນມະເຮັງໃນມົດລູກ. ລາວຈະໄດ້ຮັບການຜ່າຕັດໃຫຍ່ແລະຕິດຕາມໄປດ້ວຍການໃສ່ຄີໂມຕັ້ງຫລາຍເດືອນ ແລະພວກເຮົາກໍຍັງອາສັຍຢູ່ໃນຣົດເທຣເລີໃນເວລານັ້ນ.

ພຣະເຈົ້າໄດ້ຕຽມທາງໄກໄປກວ່າການວິຕົກກັງວົນນຳເຮືອນເທົ່ານັ້ນ: ຜູ້ທີ່ເປັນຜູ້ແທນຄົນຮັບເໝົາກໍ່ສ້າງໄດ້ເຂົ້າມາ ແລະແລ້ວສາມເດືອນກໍໄດ້ຫລຸດລົງມາເປັນພຽງສາມອາທິດເທົ່ານັ້ນ. ດ້ວຍການທີ່ພຣະເຈົ້າໄດ້ເຂົ້າມາກ່ຽວຂ້ອງນຳ, ຜູ້ກວດກາປະຈຳທີ່ນັ້ນ ພ້ອມດ້ວຍພວກທະນາຄານກໍໄດ້ອະນຸຍາດພວກເຮົາໃຫ້ໄດ້ຍ້າຍເຂົ້າໄປຢູ່ໃນບ້ານໃໝ່ນັ້ນທັງທີ່ຍັງບໍ່ທັນໄດ້ໃບປະກາດເປັນເຈົ້າຂອງເຮືອນນັ້ນເທື່ອ. ພຣະເຈົ້າໄດ້ກະຕຽມການເພື່ອເຮົາໃຫ້ມີທີມກ່ຽວກັບເຣື່ອງມະເຮັງມົດລູກທີ່ດີເດັ່ນທີ່ສຸດຂອງປະເທດທີ່ຢູ່ໃກ້ໆເມືອງໂອກລາໂຮມາຊີຕີ. ສຳຄັນກວ່ານັ້ນອີກ, ອົງພຣະຜູ້ເປັນເຈົ້າຍັງໃຫ້ຄວາມແນ່ນອນໃຈກັບພວກເຮົາອີກວ່າພຣະອົງຊົງສະຖິດຢູ່ກັບພວກເຮົາ ແລະໄດ້ປ້ອງກັນເຮົາໃນທຸກໆວັນໃນອະນາຄົດດ້ວຍ.

ບົດຮຽນໃນວັນນີ້ບອກວ່າ ພວກອິສຣາເອັນໄດ້ປະສົບກັບສະພາບການທີ່ອົດທົນເອົາບໍ່ໄຫວເພາະວ່າພວກເຂົາບໍ່ມີກຳລັງພໍທີ່ຈະປ່ຽນແປງອັນໃດໄດ້. ການເປັນທາດ ແລະງານອັນໜັກໜ່ວງໄດ້ກະທົບກັບພວກເຂົາ. ເດັກນ້ອຍຜູ້ຊາຍຂອງພວກເຂົາກໍຖືກຂ້າຖິ້ມ. ດ້ວຍຄວາມສິ້ນຫວັງ, ພວກເຂົາກໍໄດ້ຮ້ອງຂໍພຣະເຈົ້າເພື່ອໃຫ້ຊ່ອຍເຫລືອພວກເຂົາ. ພຣະເຈົ້າອົງດຽວກັນນີ້ໄດ້ຊື່ສັດຕໍ່ຄອບຄົວຂອງເຮົາ ແລະກໍໄດ້ຊື່ສັດຕໍ່ພວກອິສຣາເອັນໃນຫລາຍພັນປີຜ່ານມານັ້ນ. ພຣະເຈົ້າຮູ້ຈັກ ແລະເປັນຫ່ວງເປັນໃຍນຳທຸກໆສິ່ງທີ່ເກີດຂື້ນກັບໄພ່ພົນຂອງພຣະອົງ.

# <u>ສຶກສາພຣະຄັມພີ</u>

## 1. <u>ເມື່ອການປ່ຽນທີ່ຢູ່ໃໝ່ຫາກເປັນສິ່ງຈຳເປັນ</u> ( ອພຍ 1:5-7 )

ເມື່ອເຊື້ອສາຍຂອງຢາໂຄບທັງ 70 ຄົນຕ້ອງໄດ້ອອກຈາກບ້ານທີ່ເຂົາເຄີຍອາສັຍຢູ່ມາຕັ້ງຫລາຍເຊັ່ນຄົນແລ້ວນັ້ນ ການຈາກໄປນັ້ນກໍເປັນທີ່ຍາກໃຈແທ້. ແຕ່ວ່າເພາະການແຫ້ງແລງອັນສາຫັດຫລາຍນັ້ນ, ພວກເຂົາຈຶ່ງຫາທາງເລືອກອື່ນອີກບໍ່ໄດ້. ພວກສອນພຣະຄັມພີບາງຄົນເຊື່ອວ່າໂຢເຊບໄດ້ມີອຳນາດ ແລະຄອບຄົວຂອງຢາໂຄບໄດ້ເຂົ້າໄປໃນປະເທດອີຢິບໃນລະຍະທີ່ຜິດປົກກະຕິໃນປະວັດສາດຂອງຊາດນັ້ນ: ຄືຜູ້ປົກຄອງຄົນຕ່າງຊາດໄດ້ຢູ່ເທິງບັນລັງຂອງອີຢິບ. ພວກຜູ້ນຳຄົນເອເຊັຽທີ່ຖືກຮ້ອງວ່າຊາວຮິກໂຊສນີ້ ໄດ້ປົກຄອງປະເທດອີຢິບແຕ່ປີ 1786-1540 ກ່ອນ ຄ.ສ. ພວກເຂົາເປັນດັ່ງດຽວກັນກັບໂຢເຊັບທີ່ເປັນຍິວ.

ປຖກ 46:1-7 ໄດ້ບັນທຶກຄຳຕັກເຕືອນຂອງພຣະເຈົ້າຕໍ່ຢາໂຄບໄວ້ວ່າໃຫ້ຍົກຍ້າຍຄອບຄົວຂອງເພິ່ນໄປຢູ່ທີ່ແຜ່ນດິນໃໝ່. ພຣະເຈົ້າໄດ້ຕຽມສຳລັບໄພ່ພົນເຫລົ່ານີ້ຢ່າງພິເສດໃນທີ່ແຜ່ນດິນໃໝ່ນີ້ໂດຍໃຫ້ມີຄົນຊັ້ນປົກຄອງທີ່ມີຄວາມເຫັນອົກເຫັນໃຈຕໍ່ພວກເຂົາ. ດັ່ງທີ່ເຂົາໄດ້ຮັບແຜ່ນດິນໂຄເຊັນທີ່ປູກຝັງດີໃນແຜ່ນດິນປາກແມ່ນ້ຳນິນທີ່ເຂົາເຈົ້າສາມາດໃຊ້ຊີວິດ, ປູກຝັງ, ແລະຈະເຣີນເຜົ່າພັນກັນ. ຕາມທີ່ຂໍ້ 7 ເວົ້າວ່າພວກອິສຣາເອັນກໍໄດ້ເປັນຢ່າງນັ້ນແທ້. ພວກເຂົາໄດ້ຄຳສັ່ງຂອງພຣະເຈົ້າທີ່ບອກວ່າໃຫ້ເຂົາແຜ່ຜາຍກັນຢ່າງຫລວງຫລາຍຈົນເຕັມແຜ່ນດິນໂລກ ( ປຖກ 1:28 ).

ໃນ ອພຍ 1:7 ໄດ້ບັນຈຸຄຳຫລືປະໂຍກທີ່ແຕກຕ່າງກັນຫລາຍຢ່າງທີ່ບອກວ່າພວກອິສຣະເອັນໄດ້ແຜ່ຜາຍກັນຢ່າງໄວວາ. ໂດຍເຣີ່ມຕົ້ນຈາກຈຳນວນແລກພຽງ 70 ຄົນເທົ່ານັ້ນ, ແລະດ້ວຍການຄິດໄລ່ການຂຍາຍພັນພຽງຫ້າສ່ວນຮ້ອຍຕາມການຄິດໄລ່ຂອງນັກປາດ, ພວກເຂົາກໍສາມາດເພີ່ມຈຳນວນຂຶ້ນເປັນກວ່າສອງລ້ານຄົນແລ້ວພຽງແຕ່ໃນເວລາສອງຮ້ອຍກວ່າປີເທົ່ານັ້ນ! ພວກເຂົາໄດ້ທຳຕາມແຜນການຂອງພຣະເຈົ້າແລະພຣະອົງກໍໄດ້ອວຍພອນເຂົາ.

ພໍ່ແມ່ຂອງທ່ານແຣນດີ ແລະນາງແຊນດີບໍ່ໄດ້ເສັຽຫົວໄປໃນເຣື່ອງທີ່ວ່າຫລານທັງສາມຄົນຂອງພວກເພິ່ນໄດ້ໄປໃຊ້ຊີວິດຢູ່ແຫລມຕອນໃຕ້ຂອງທະວີບອາຟຣິກາດ້ວຍການເປັນຜູ້ໄປປະກາດຕ່າງປະເທດຂອງຄະນະຊາວເທີນບັບຕິສ. ພຣະເຈົ້າໃຫ້ຄອບຄົວນີ້ມີການຮັບໃຊ້ຢ່າງດີໃນທີ່ນັ້ນ ຊຶ່ງເປັນການຮັບໃຊ້ທີ່ດຳເນີນມາຈົນເຖິງທຸກວັນນີ້. ລູກຂອງທ່ານແຣນດີແລະນາງແຊນດີໄດ້ຈະເຣີນແລະງອກງາມຂຶ້ນໃນບ້ານໃໝ່ຂອງພວກເຂົາ. ລູກຜູ້ໃຫຍ່ທັງສອງຄົນຂອງເຂົາເຈົ້າໄດ້ກັບມາອະເມຣິກາໃນຫມຶ່ງນີ້ນັ້ນ ໄດ້ເຂົ້າໂຮງຮຽນມະຫາວິທະຍາລັຍ, ໄດ້ຕຽມພ້ອມໄວ້ຢ່າງດີສຳລັບການຮັບໃຊ້ນີ້. ຄອບຄົວນີ້ໄດ້ທຳຕາມແຜນການຂອງພຣະເຈົ້າ, ແລະພຣະເຈົ້າກໍໄດ້ອວຍພອນພວກເຂົາເຈົ້າ.

ຊີວິດຂອງພວກເຮົາກໍມີການປ່ຽນແປງເປັນປະຈຳ. ບາງຄອບຄົວກໍໄດ້ປະສົບກັບການປ່ຽນແປງຊີວິດເພາະດ້ວຍພະຍາດບາດເຈັບ, ແລະຄອບຄົວອື່ນໆກໍໄດ້ຍ້າຍໄປຢູ່ທີ່ຂອບໂລກພຸ້ນເພາະໄດ້ທຳຕາມການຮັບໃຊ້ພຣະເຈົ້າ. ຄົນທີ່ເຊື່ອມີເຫດຜົນທຸກຢ່າງທີ່ຈະຮູ້ຈັກບຸນຄຸນວ່າການສະຖິດຢູ່ນຳຂອງພຣະເຈົ້າ ແລະການຕຽມຂອງພຣະອົງນັ້ນຈະບໍ່ມີຜົນແດນທາງດ້ານພູມີສາດ ຫລືວ່າສະພາບການທີ່ປ່ຽນແປງໄປ.

## 2. <u>ເມື່ອຊີວິດຫາກປ່ຽນໄປຢ່າງຂົມຂື່ນ</u> ( ອພຍ 1:8-14 )

ທຸກຢ່າງເປັນໄປດ້ວຍດີໃນລະຍະນຶ່ງ ຫລືບາງເທື່ອອາດຈະເຖິງເວລາທີ່ພວກຮິກໂຊສນີ້ຈະຖືກເນຣະເທດໃຫ້ໜີອອກໄປຈາກປະເທດນີ້ກໍໄດ້. ເຈົ້າຊີວິດອົງໃໝ່ທີ່ບໍ່ຮູ້ເຣື່ອງຫຽັງທີ່ກ່າວໄວ້ໃນຂໍ້ 8 ນີ້, ເບິ່ງຄືວ່າຈະບອກເຖິງການກັບມາມີອຳນາດຄືນໃນພຣະຣາຊວັງອີຢິບ. ກະສັດຟາໂຣທັງຫລາຍຂອງອີຢິບໄດ້ມີເຜົ່າພັນທີ່ບໍ່ການກ່ຽວພັນອັນໃດກັບພວກເຮັບເຣີ, ແລະກໍບໍ່ໄດ້ຮູ້ຫຽັງເລີຍກ່ຽວກັບການອຸທິດຕົນຂອງໂຢເຊບໃນອີຢິບ.

ຊາວເຮັບເຣີໄດ້ກາຍເປັນບັນຫາອັນໜັກໃຫ້ແກ່ພວກຣາຊວົງໃໝ່ນີ້. ກະສັດຟາໂຣຢ້ານວ່າພວກເຂົາຈະທັນເຂົ້າຮ່ວມກັບສັດຕຣູຂອງອີຢິບແລ້ວຈະເກີດເປັນຜົນອັນບໍ່ດີຕໍ່ອີຢິບ. ໃນຂະນະດຽວກັນນັ້ນ ພວກເຮັບເຣີກໍໄດ້ກາຍເປັນສ່ວນສຳຄັນໃນທາງເສດຖະກິດຕໍ່ອີຢິບດ້ວຍ. ຟາໂຣຍັງໄດ້ເປັນຫ່ວງເປັນໃຍວ່າຊາວເຮັບເຣີອາດຈະໜີຈາກປະເທດກໍອາດເປັນໄດ້.

ການພະຍາຍາມອັນທຳອິດຂອງຟາໂຣທີ່ຈະແກ້ໄຂບັນຫານີ້ກໍເກີດຂຶ້ນ. ໃນຄວາມພະຍາຍາມຂອງເພິ່ນທີ່ຈະກຳນົດການເກີດຂອງຄົນເຮັບເຣີແລະໃນຂະນະດຽວກັນນັ້ນກໍບໍ່ໃຫ້ເຂົາມີການຕໍ່ສູ້ເກີດຂຶ້ນ, ເພິ່ນກໍໄດ້ລິດສິດເຂົາລົງໃຫ້ກາຍເປັນທາດເສັງ. ພວກເຂົາໄດ້ຖືກບັງຄັບໃຫ້ສ້າງເມືອງແລະຕຽມອຸປະກອນຫລາຍຢ່າງເພື່ອແຜນການກໍ່ສ້າງຕ່າງໆ ແຜນການເຫລົ່ານັ້ນບໍ່ບັງເກີດຜົນ: ພວກອິສຣະເອັນຍັງເພີ່ມພົລເມືອງຫລາຍຂຶ້ນຄືເກົ່າ.

ອຸບາຍຕໍ່ໄປຂອງຟາໂຣແມ່ນການຂ້າເດັກທີ່ເກີດໃໝ່ ( ຂໍ້ 15-22 ). ດ້ວຍການຂ້າເດັກຊາຍທີ່ເກີດໃໝ່, ທຳອິດແມ່ນຫລັງຈາກເກີດມາແລ້ວ ແລະສຸດທ້າຍກໍແມ່ນການເຮັດໃຫ້ຈົມນ້ຳຕາຍ. ຟາໂຣຄິດວ່າເພິ່ນຈະສາມາດຈຳກັດຄວາມສາມາດຂອງການເປັນທະຫານຂອງຊາດເຮບເລີບໍ່ໄດ້ຖ້າຫາກບໍ່ໃຫ້ພວກແມ່ຍິງຫມໍຕຳແຍລົງທຳງານ. ການກະທຳທີ່ໂຫດຮ້າຍແລະປ່າເຖື່ອນອັນນີ້ຂອງຟາໂຣກໍບໍ່ໄດ້ຜົນ: ມັນກໍໃຊ້ການບໍ່ໄດ້ຄືກັນຄືໃນເວລາຕໍ່ມາຂອງສຕາລິນ, ຮິດເລີ, ແລະຊູດເຊັນ. ໃນເມື່ອເຫດການອັນໂຫດຮ້າຍອັນທີສິບສຸດທ້າຍໄດ້ເຂົ້າມາເຖິງອີຢິບຊຶ່ງເຮັດໃຫ້ລູກຊາຍກົກທຸກຄົນໃນອີຢິບແມ້ແຕ່ລູກຊາຍກົກຂອງຟາໂຣເອງກໍໄດ້ຕາຍຄືກັນ ( ອພຍ 10 ). ພຣະເຈົ້າຊົງເປັນອົງມະຫາກະສັດອົງຍິ່ງໃຫຍ່; ຄວາມຍຸດຕິທັມຂອງພຣະອົງນັ້ນກໍສົມບູນ. ເຖິງຢ່າງໃດກໍດີ, ກ່ອນທີ່ຄວາມຍຸດຕິທັມນັ້ນຈະເກີດຜົນນັ້ນ ພວກອິສຣະເອັນກໍໄດ້ປະສົບກັບຍຸກແຫ່ງຄວາມມືດແລະຄວາມໂສກເສົ້າ.

ຂ້າພະເຈົ້າມັກສອນເດັກນ້ອຍ ແລະເວົ້າກັບເຂົາກ່ຽວກັບເຣື່ອງຄວາມເຊື່ອສ່ວນບຸກຄົນ. ໃນໂອງນີ້, ຂ້າພະເຈົ້າໄດ້ເວົ້າໃນຫ້ອງຂອງເດັກນ້ອຍຜູ້ຊາຍຫ້ອງ ປ. 5. ຂ້າພະເຈົ້າໄດ້ຖາມວ່າພວກເຂົາໄດ້ຮູ້ຢ່າງຄັກແນ່ວ່າພຣະຄັມພີນັ້ນເປັນແລະພຣະເຈົ້າເປັນຄວາມຈິງໄດ້ຢ່າງໃດ. ເດັກນ້ອຍຄົນນຶ່ງໄດ້ເວົ້າວ່າ, " ພໍ່ແມ່ຂອງຂ້ານ້ອຍໄດ້ເວົ້າໃຫ້ຟັງ, ແລະເພິ່ນຄົງບໍ່ຕົວະເຣື່ອງນີ້ດອກ."

ຂ້າພະເຈົ້າໄດ້ຕອບລາວດ້ວຍເວົ້າວ່າ ເດັກນ້ອຍຊາວອິສລາມກໍອາດຄິດແບບດຽວກັນນີ້ແຫລະຕໍ່ພໍ່ແມ່ຂອງເຂົາທີ່ໄດ້ສິດສອນເຂົານັ້ນ. ແລະແລ້ວຂ້າພະເຈົ້າກໍໄດ້ຖາມຄຳຖາມເກົ່າ. ຫລັງຈາກນັ້ນບໍ່ດົນ, ກໍມີເດັກນ້ອຍຄົນນຶ່ງໄດ້ຍົກມືຂຶ້ນເວົ້າວ່າ, " ອາທິດກ່ອນນີ້ຂ້ານ້ອຍໄດ້ເກີດອຸປະຕິເຫດ ແລະໄດ້ຢ້ານວ່າຂ້ານ້ອຍຈະຕົກໄປໃນກົ້ນເຫວເລິກ. ຂ້ານ້ອຍບໍ່ຮູ້ວ່າຈະເຮັດຢ່າງໃດ, ແຕ່ວ່າຂ້ານ້ອຍຂໍໃຫ້ພຣະເຈົ້າຊ່ອຍ. ພຣະອົງໄດ້ຊ່ອຍໃຫ້ຂ້ານ້ອຍໄດ້ພົບກັບທາງອອກ. ຂ້ານ້ອຍຮູ້ວ່າພຣະອົງມີຈິງເພາະວ່າພຣະອົງຊົງຢູ່ທີ່ນັ້ນເມື່ອຂ້ານ້ອຍຕ້ອງການພຣະອົງ."

ພຣະເຈົ້າກໍໄດ້ຢູ່ທີ່ນັ້ນສຳລັບພວກອິສຣາເອັນເຊັ່ນດຽວກັນ. ພຣະເຈົ້າບໍ່ແມ່ນວ່າບໍ່ຮູ້ຕໍ່ສະພາບການຕ່າງໆຂອງພວກອິສຣະເອັນໃນອີຢິບ. ຄວາມຈິງແລ້ວ, ພຣະເຈົ້າໄດ້ເຮັດໃຫ້ອັບຣາຮາມໄດ້ຮູ້ກ່ອນຕັ້ງຫລາຍຮ້ອຍປີແລ້ວວ່າ ສີ່ຮ້ອຍປີຂອງການເປັນຂ້າທາດແລະການກົດຂີ່ຂົ່ມເຫັງໃນຕ່າງແດນຈະໄດ້ເກີດຂຶ້ນໃນຖ້າມກາງລູກຫລານຂອງເພິ່ນ ( ປຖກ 15:13 ). ໃນລະຍະຫລາຍເດືອນຂອງການປິ່ນໂຣກມະເຮັງຂອງເມັຽຂ້າພະເຈົ້າ, ພວກເຮົາໄດ້ຮູ້ສເມີວ່າພຣະເຈົ້າໄດ້ຮູ້ຈັກຄັກແນ່ເຖິງສະພາບການທຸກຢ່າງຂອງນາງ. ເຫມືອນດັ່ງເດັກຊາຍຄົນນັ້ນທີ່ຂ້າງບົນນີ້ໄດ້ຮູ້ວ່າພຣະເຈົ້າໄດ້ຢູ່ທີ່ນັ້ນກັບພວກເຮົາ. ພຣະອົງສະຖິດຢູ່ທີ່ນັ້ນເພື່ອນຳທາງ, ເພື່ອໃຫ້ຄວາມເລົ້າໂລມແລະຄວາມຫມັ້ນໃຈ, ແລະເພື່ອການປິ່ນປົວ.

ພຣະເຈົ້າຈະຢູ່ທີ່ນັ້ນເພື່ອທ່ານຄືກັນ ເຖິງແມ່ນວ່າທ່ານອາດຈະບໍ່ເປັນພຣະອົງໃນເວລານັ້ນກໍຕາມ. ຄົນທີ່ເຊື່ອເປັນຄົນມີປັນຍາທີ່ຮູ້ວ່າຕົນບໍ່ໄດ້ເປັນຜູ້ຍົກເວັ້ນຈາກການປ່ຽນແປງທີ່ບໍ່ໄດ້ຄາດຝັນມາກ່ອນ, ການຖືກຄວາມບໍ່ຍຸດຕິທັມ, ຫລືວ່າລວມໄປຮອດການວິນາສກັມ; ແລະທັງຂອບຄຸນພຣະເຈົ້າທີ່ພຣະອົງບໍ່ເຄີຍຖືກຈັບໄດ້ວ່າບໍ່ຮູ້ຈັກຮອດການປ່ຽນແປງສະພາບການຂອງພວກເຂົາ.

### 3. <u>ເມື່ອການຊ່ອຍເຫລືອຫາກມາເຖິງຢ່າງຊ້ານານ</u> ( ອພຍ 2:23-2 5 )

ພຣະອົງເຈົ້າຂ້າ, ຈົ່ງໃຫ້ຄວາມເປັນໃຈແກ່ຂ້ານ້ອຍ ແລະຈົ່ງໃຫ້ຂ້ານ້ອຍດຽວນີ້ໂລດ! ອັນນີ້ແມ່ນການອະທິຖານຂອງຊາວອິສຣາເອັນຢ່າງງ່າຍໆໃນເມື່ອເຂົາໄດ້ລໍຄອຍພຣະເຈົ້າ. ໃນຂະນະນັ້ນ, ພວກເຂົາໄດ້ເປັນຂ້າທາດເກືອບຈະໄດ້ແປດສິບປີແລ້ວ. ບາງເທື່ອພວກເຂົາອາດຄິດວ່າພຣະເຈົ້າບໍ່ຮູ້ ຫລືວ່າອາດບໍ່ເປັນຫ່ວງເປັນໃຍໃນສະພາບການພວກເຂົາ ແຕ່ວ່າບໍ່ແມ່ນຢ່າງນັ້ນດອກມັນເປັນພຽງຄິດໄປຢ່າງນັ້ນຊື່ໆ. ພຣະເຈົ້າໄດ້ທຳພາຣະກິດຂອງພຣະອົງໃນປີ

ແຫ່ງຄວາມທຸກຍາກ ແລະການຖືກລືມນັ້ນ, ຄວາມເຕີບຕົວແລະປ້ອງກັນຮັກສາຜູ້ທີ່ຕໍ່ມາໄດ້ນໍາເຂົາໄປສູ່ຄວາມພົ້ນນັ້ນ.

ເຈົ້າຊີວິດຂອງອີຢີບໄດ້ຕາຍໄປ, ແຕ່ວ່າອັນນັ້ນຍັງບໍ່ທັນໄດ້ເຖິງເວລາທີ່ຄວາມທໍຣະມານເຈັບປວດຂອງຊາວເຮັບເຣີຈະສິ້ນສຸດລົງເທື່ອ. ພວກເຂົາໄດ້ຄວນຄາງເພາະດ້ວຍງານທີ່ຍາກລໍາບາກຫລາຍ, ແລະພຣະເຈົ້າກໍໄດ້ຍິນຄໍາຄວນຄາງຂອງພວກເຂົາ. ພຣະເຈົ້າຊົງຮັກອິສຣາເອັນ ແລະພຣະອົງໄດ້ເຮັດພັນທະສັນຍາທີ່ບໍ່ປ່ຽນແປງກັບບັນພະບຸຣຸດຂອງເຂົາຄື ອັບຣາຮາມ, ອີຊາກ, ແລະຢາໂຄບ. ພຣະເຈົ້າຈະໄດ້ນັບຖືພຣະສັນຍານັ້ນ; ພຣະອົງຈະໄດ້ນໍາເຂົາໃຫ້ພົ້ນຈາກການເປັນຂ້າທາດນັ້ນ.

ທ່ານແຊມເປັນເພື່ອນທີ່ເປັນນັກປະກາດຂ່າວປະເສີດທີ່ຂ້າພະເຈົ້າໄດ້ຮູ້ໃນຕອນຫລັງວ່າ ຊີວິດຂອງລາວໃນປີກ່ອນໆນັ້ນລາວໄດ້ຖືກພວກຣັຖບານມາກຊິສໃນປະເທດນຶ່ງທີ່ອາຟຣິກາ ບ່ອນທີ່ລາວແລະເມັຽຂອງລາວໄດ້ໄປຮັບໃຊ້ຢູ່. ລາວແລະຜູ້ນໍາຄຣິສຕຽນອື່ນໆໄດ້ຖືກຕັດສິນໃຫ້ປະຫານຊີວິດດ້ວຍການຍິງເປົ້າຈາກທະຫານໝູ່ນຶ່ງ. ຕັ້ງຫລາຍອາທິດທີ່ລາວໄດ້ຟັງວ່າຄົນຍາມໄດ້ເຂົ້າມາຈັບເອົາໝູ່ຂອງລາວ ແລ້ວກໍຄົນອື່ນໆຕໍ່ກັນ. ສນາມທີ່ເຂົາໃຊ້ສໍາລັບການປະຫານກໍແມ່ນເດີ່ນທີ່ຢູ່ຂ້າງຫ້ອງຂອງລາວນັ້ນ. ລາວໄດ້ອະທິຖານວ່າໃນການຕາຍຂອງລາວນັ້ນ, ຂໍໃຫ້ພຣະເຈົ້າໄດ້ຮັບກຽດເທີ້ນ. ສ່ວນເມັຽຂອງລາວກໍໄດ້ນໍາພາການອະທິຖານທີ່ແຜ່ກວ້າງອອກໄປເພື່ອຜົວຂອງນາງ ແລະເພື່ອການປ່ອຍຕົວໃຫ້ເປັນອິສຣະ. ໃນຄືນທີ່ທ່ານແຊມຄິດວ່າເປັນທີຂອງລາວຈະໄດ້ຖືກນໍາອອກໄປຂ້ານັ້ນ, ພຣະເຈົ້າໄດ້ຕອບການອະທິຖານຂອງເພື່ອນທັງຫລາຍຂອງລາວ. ແລະແລ້ວແຊມກໍໄດ້ຖືກປ່ອຍຕົວໃຫ້ໄປຢູ່ກັບໝູ່ຮັກຂອງລາວ.

ພວກເຮົາສາມາດໝັ້ນໃຈໄດ້ວ່າພຣະເຈົ້າຮູ້ຈັກສະພາບການຂອງພວກເຮົາວ່າເປັນຢ່າງໃດ, ແລະພຣະອົງຈະກະທໍາທຸກຢ່າງຕາງພວກເຮົາ. ການກະທໍາຂອງພຣະເຈົ້າຕາງພວກເຮົາຈະບໍ່ກ່ຽວກັບການນໍາເຮົາອອກຈາກບັນຫາຂອງພວກເຮົາ. ມັນອາດຈະມີຄວາມໝາຍວ່າພຣະເຈົ້າຈະໃຫ້ເຮົາໄດ້ຮັບພຣະຄຸນອັນຈໍາເປັນ ແລະກໍາລັງທີ່ຈະຮັບພາຣະອັນໜັກໜ່ວງນັ້ນໄດ້ ( 2 ກຣທ 12:8-10 ). ມັນອາດມີຄວາມໝາຍວ່າການທົດສອບຂອງພວກເຮົາຈະເຮັດໃຫ້ເກີດຄວາມອົດທົນ( ຢກບ 1:2-4 ). ຫລືວ່າມັນອາດພຽງຈະມີຄວາມໝາຍວ່າພຣະເຈົ້າຈະສະຖິດຢູ່ກັບເຮົາໃນຂະນະທີ່ພວກເຮົາໄດ້ເດີນໄປຕາມຮ່ອມພູເຂົາທີ່ມືດຕຶບ ( ພສສ 23:4 ). ພຣະຄຣິດໄດ້ໃຫ້ສາວົກ ແລະພວກເຮົາທັງຫລາຍວາງໃຈໄດ້ເມື່ອພຣະອົງຊົງກ່າວວ່າ, " ເຮົາໄດ້ບອກເຣື່ອງນີ້ແກ່ທ່ານທັງຫລາຍ ເພື່ອພວກທ່ານຈະມີຄວາມສງົບສຸກໃນເຮົາ ໃນໂລກນີ້ພວກທ່ານຈະມີຄວາມທຸກລໍາບາກ ແຕ່ຈົ່ງຊື່ນໃຈເທາະຝ່າຍເຮົາໄດ້ຊະນະໂລກແລ້ວ "(ຢຮ 6:33).

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.com ແປໂດຍ V.S.